**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເລກທີ 6351 /ກຊສ

ນະຄອນຫຼວງວຽງຈັນ, ວັນທີ 29 ທັນວາ 2022

# ຂໍ້ຕົກລົງ

## ວ່າດ້ວຍ ການຮັບຮອງ ແລະ ປະກາດໃຊ້ ແຜນດຳເນີນງານການຈັດຊື້-ຈັດຈ້າງສີຂຽວພາກລັດ ຂອງ ສປປ ລາວ 2022-2025, ວິໄສທັດ ຮອດປີ 2030

- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສະບັບເລກທີ 573/ນຍ, ລົງວັນທີ 20 ກັນຍາ 2021;
- ອີງຕາມ ແຈ້ງການ ຂອງ ທ່ານ ຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 1231/ກຜທ.ຮມສ-ຈສກ.08, ລົງວັນທີ 06 ສິງຫາ 2020;
- ອີງຕາມ ອີງຕາມ ບົດລາຍງານຈາກ ກົມແຜນການ ແລະ ການເງິນ ສະບັບເລກທີ 7617/ກຊສ.ກຜງ, ລົງວັນທີ 13 ທັນວາ 2022.

## ລັດຖະມົນຕີ ຕົກລົງ:

**ມາດຕາ 1:** ເຫັນດີຮັບຮອງເອົາ ແຜນດຳເນີນງານການຈັດຊື້-ຈັດຈ້າງສີຂຽວພາກລັດ ຂອງ ສປປ ລາວ 2022-2025, ວິໄສທັດ ຮອດປີ 2030;

**ມາດຕາ 2:** ມອບໃຫ້ ກົມແຜນການ ແລະ ການເງິນ ເປັນໃຈກາງປະສານສົມທົບກັບພາກສ່ວນກ່ຽວຂ້ອງ ພ້ອມທັງຊຸກຍູ້ການຈັດຕັ້ງປະຕິບັດ ແລະ ຕິດຕາມປະເມີນຜົນ ແຜນດຳເນີນງານການຈັດຊື້-ຈັດຈ້າງສີຂຽວພາກລັດ ຂອງ ສປປ ລາວ 2022-2025, ວິໄສທັດ ຮອດປີ 2030;

**ມາດຕາ 3:** ຫ້ອງການ, ບັນດາກົມ, ກອງ, ສະຖາບັນອ້ອມຂ້າງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມແຂວງ ແລະ ນະຄອນຫຼວງ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເມືອງ, ນະຄອນ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງຜັນຂະຫຍາຍຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ;

**ມາດຕາ 4:** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ລັດຖະມົນຕີ**

ລັດຖະມົນຕີ

ບ.ບຸນຄຳ ວໍລະຈິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງ ຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເລກທີ 6350 /ກຊສ

ນະຄອນຫຼວງວຽງຈັນ, ວັນທີ 29 ທັນວາ 2022

# ແຜນງານດຳເນີນງານການຈັດຊື້-ຈັດຈ້າງສີຂຽວພາກລັດ ຂອງ ສປປ ລາວ 2022-2025, ວິໄສທັດ ຮອດປີ 2030

- ອີງຕາມ ດຳລັດວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສະບັບເລກທີ 573/ນຍ, ລົງວັນທີ 20 ກັນຍາ 2021;
- ອີງຕາມ ມາດຕາ 4 ວັກທີ 3 ຂອງກົດໝາຍວ່າດ້ວຍ ການຈັດຊື້ຈັດ-ຈ້າງດ້ວຍທຶນຂອງລັດ, ສະບັບເລກທີ 30/ສພຊ, ລົງວັນທີ 2 ພະຈິກ 2017;
- ອີງຕາມ ແຈ້ງການຂອງ ທ່ານຮອງນາຍົກລັດຖະມົນຕີ, ລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ສະບັບເລກທີ 1231/ກຜທ.ຮມສ-ຈສກ.08, ລົງວັນທີ 6 ສິງຫາ 2020;
- ອີງຕາມ ແຜນງານ ການບໍລິໂພກ ແລະ ການຜະລິດແບບຍືນຍົງ ຂອງ ສປປ ລາວ, ວິໄສທັດຮອດປີ 2030, ສະບັບເລກທີ 2816/ກຊສ, ລົງວັນທີ 27 ພຶດສະພາ 2022;
- ອີງຕາມ ບົດລາຍງານຈາກ ກົມແຜນການ ແລະ ການເງິນ ສະບັບເລກທີ 7617/ກຊສ.ກຜງ, ລົງວັນທີ 13 ທັນວາ 2022.

## I. ຄວາມເປັນມາ

ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ IX (2021-2025) ແລະ ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດ ຮອດປີ 2030 ໄດ້ລະບຸຈະແຈ້ງດ້ານນະໂຍບາຍໃນການຫັນປ່ຽນຮູບແບບການພັດທະນາຂອງ ສປປ ລາວ ໃຫ້ເປັນໄປຕາມທິດສີຂຽວ ແລະ ຍືນຍົງ ໂດຍໄດ້ມີການຜັນຂະຫຍາຍໄປເປັນແຜນການສະເພາະຂອງແຕ່ລະຂະແໜງການ ເຊິ່ງສຳລັບຂະແໜງການເງິນແມ່ນຂະແໜງການຫຼັກໜຶ່ງທີ່ຕິດພັນກັບການສົ່ງເສີມໃຫ້ພາກລັດຫັນມາດຳເນີນການຈັດຊື້-ຈັດຈ້າງຜະລິດຕະພັນ ແລະ ບໍລິການທີ່ເປັນມິດກັບສິ່ງແວດລ້ອມ ຫຼື ສີຂຽວ ເພື່ອຄຸນນະພາບສິ່ງແວດລ້ອມທີ່ຮັບປະກັນຄຸນນະພາບຊີວິດທີ່ດີ ແລະ ການພັດທະນາຕາມທິດສີຂຽວ ແລະ ຍືນຍົງ.

ການບໍລິໂພກ ແລະ ການຜະລິດແບບຍືນຍົງ (Sustainable Consumption and Production ຫຼື SCP) ແມ່ນໜຶ່ງໃນເປົ້າໝາຍການພັດທະນາແບບຍືນຍົງເປົ້າໝາຍທີ 12 (Sustainable Development Goal ຫຼື SDG 12) ໂດຍມີຈຸດປະສົງໃນການຮັບປະກັນການນຳໃຊ້ຊັບພະຍາກອນທຳມະຊາດຢ່າງມີຄວາມຮັບ ຜິດຊອບ ໂດຍຫັນມາເປັນຮູບແບບຍືນຍົງ ເຊິ່ງແບ່ງອອກເປັນ 2 ສ່ວນຄື: ການບໍລິໂພກ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດເຂົ້າໃນການຜະລິດ ເຊິ່ງໃນນັ້ນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມທີ່ເຮັດໜ້າທີ່ເປັນຈຸດປະສານງານແຫ່ງຊາດຂອງວຽກງານດັ່ງກ່າວ ແລະ ໄດ້ສຳເລັດການສ້າງແຜນງານການບໍລິໂພກ ແລະ ການຜະລິດແບບຍືນຍົງ ຂອງ ສປປ ລາວ 2022-2025, ວິໄສທັດຮອດປີ 2030 ແລະ ປະກາດໃຊ້ເປັນທີ່ຮຽບຮ້ອຍແລ້ວ.

ສິ່ງທ້າທາຍໜຶ່ງທີ່ເປັນປັດໄຈສຳຄັນໃນການຊຸກຍູ້ໃຫ້ ສປປ ລາວ ເປັນປະເທດທີ່ຫັນມາບໍລິໂພກ ແລະ ຜະລິດສິນຄ້າ ແລະ ບໍລິການທີ່ເປັນມິດກັບສິ່ງແວດລ້ອມໃຫ້ບັນລຸຜົນນັ້ນ ຈຳເປັນຕ້ອງໄດ້ມີການກະຕຸ້ນດ້ວຍການມີສ່ວນຮ່ວມຜ່ານການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ເນື່ອງຈາກສັດສ່ວນການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດທີ່ມີ

ທ່າແຮງສູງ ໂດຍສະເພາະຫາກສາມາດຊຸກຍູ້ໃຫ້ອົງການຈັດຕັ້ງລັດເປັນຜູ້ນໍາພາຫຼັກການຈັດຊື້-ຈັດຈ້າງບັນດາສິນຄ້າ ແລະ ການບໍລິການທີ່ເປັນມິດກັບສິ່ງແວດລ້ອມກໍ່ຍິ່ງເປັນການສົ່ງເສີມໃຫ້ຄວາມຕ້ອງການສິນຄ້າ ແລະ ຜະລິດຕະພັນທີ່ເປັນມິດກັບສິ່ງແວດລ້ອມເພີ່ມຂຶ້ນ ທັງເປັນການສ້າງໂອກາດໃຫ້ແກ່ຜູ້ຜະລິດສິນຄ້າ ແລະ ການບໍລິການ ທີ່ເປັນມິດກັບສິ່ງແວດລ້ອມຢູ່ໃນພາກການຜະລິດພາຍໃນຂອບເຂດທົ່ວປະເທດ.

ການຈັດຊື້-ຈັດຈ້າງສີຂຽວພາກລັດ ແມ່ນການຈັດຊື້-ຈັດຈ້າງສິນຄ້າ, ຜະລິດຕະພັນ ແລະ ການບໍລິການທີ່ເປັນມິດກັບສິ່ງແວດລ້ອມ ດ້ວຍທຶນຂອງລັດ ມີເປົ້າໝາຍເພື່ອໃຫ້ພາກລັດເປັນສ່ວນສໍາຄັນໃນການປະກອບສ່ວນສະໜັບສະໜູນການບໍລິໂພກສິນຄ້າ, ຜະລິດຕະພັນ ແລະ ການບໍລິການທີ່ເປັນມິດກັບສິ່ງແວດລ້ອມ, ສົ່ງເສີມການຜະລິດສິນຄ້າ, ຜະລິດຕະພັນ ແລະ ການບໍລິການທີ່ເປັນມິດກັບສິ່ງແວດລ້ອມພາຍໃນຕະຫຼາດ.

ເພື່ອເປັນການຜັນຂະຫຍາຍມາດຕາ 4 ວັກທີ 3 ຂອງ ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດໃຫ້ເປັນໄປຕາມທິດສີຂຽວ ແລະ ຍືນຍົງ ແລະ ສອດຄ່ອງກັບແຜນງານກ່ຽວຂ້ອງ ໂດຍສະເພາະການປັບປຸງຂອບນິຕິກໍາກ່ຽວຂ້ອງ ແລະ ການກະກຽມຄວາມພ້ອມຂອງອົງປະກອບຕ່າງໆ, ກະຊວງຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ ໃນຖານະທີ່ຮັບຜິດຊອບຈຸດປະສານງານແຫ່ງຊາດຂອງວຽກງານ ການບໍລິໂພກ ແລະ ການຜະລິດແບບຍືນຍົງ ໂດຍການປະສານສົມທົບກັບ ກະຊວງການເງິນ, ກະຊວງອຸດສາຫະກໍາ ແລະ ການຄ້າ ແລະ ຂະແໜງການກ່ຽວຂ້ອງ ເຫັນໄດ້ເຖິງຄວາມຈໍາເປັນໃນການສ້າງ ແຜນດໍາເນີນງານ ການຈັດຊື້-ຈັດຈ້າງສີຂຽວພາກລັດຂອງ ສປປ ລາວ 2022-2025, ວິໄສທັດຮອດປີ 2030 ຂຶ້ນ ເພື່ອກໍານົດບັນດາເປົ້າໝາຍລວມ, ຍຸດທະວິທີ, ການຈັດຕັ້ງປະຕິບັດ, ບັນດາຄາດໝາຍ ແລະ ຕົວຊີ້ວັດກ່ຽວຂ້ອງ ມີການແບ່ງຄວາມຮັບຜິດຊອບໃຫ້ມີຄວາມເປັນເອກະພາບ ແລະ ສະໜັບສະໜູນເຊິ່ງກັນ ແລະ ກັນ ລະຫວ່າງ ຂະແໜງການກ່ຽວຂ້ອງພ້ອມທັງມີການກໍານົດກົນໄກຕິດຕາມກວດກາ, ປະເມີນຜົນ ແລະ ລາຍງານຢ່າງເປັນລະບົບ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດວຽກງານທີ່ຕິດພັນກັບການຈັດຊື້-ຈັດຈ້າງສີຂຽວພາກລັດ ກໍຄື ການບໍລິໂພກ ແລະ ການຜະລິດແບບຍືນຍົງໃນທົ່ວປະເທດເປັນລະບົບ, ເປັນຮູບປະທໍາ, ມີປະສິດທິພາບ, ປະສິດທິຜົນ ແລະ ຮັບປະກັນຄວາມສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## II. ວິໄສທັດ

ຮອດປີ 2030, ການຈັດຊື້-ຈັດຈ້າງສີຂຽວພາກລັດ ຈະເປັນການຈັດຊື້ຫຼັກຂອງລັດຖະບານໂດຍການຊຸກຍູ້ການຜະລິດ ແລະ ການບໍລິໂພກສີຂຽວພາຍໃນປະເທດ ເພື່ອສະໜັບສະໜູນຍຸດທະສາດແຫ່ງຊາດ ກ່ຽວກັບ ການເຕີບໂຕສີຂຽວ ແລະ ການພັດທະນາແບບຍືນຍົງ.

## III. ເປົ້າໝາຍລວມ ແລະ ຕົວຊີ້ວັດລວມ

**ເປົ້າໝາຍລວມທີ 1:** ບັນດາອົງການຈັດຕັ້ງຂອງລັດຖະບານປະຕິບັດການຈັດຊື້-ຈັດຈ້າງສີຂຽວພາກລັດ.

- **ຕົວຊີ້ວັດລວມ ແລະ ຄາດໝາຍລວມ:**

ອັດຕາສ່ວນຂອງອົງການຂອງລັດຖະບານປະຕິບັດການຈັດຊື້-ຈັດຈ້າງສີຂຽວພາກລັດ ແລະ ມີການກໍານົດຄາດໝາຍລວມ ໃຫ້ໄດ້ 50% ພາຍໃນປີ 2025.

**ເປົ້າໝາຍລວມທີ 2:** ການລົງທຶນໃຫ້ແກ່ການຜະລິດຜະລິດຕະພັນສີຂຽວພາຍໃນປະເທດ ແລະ ການບໍລິການເພີ່ມຂຶ້ນ.

- **ຕົວຊີ້ວັດ ແລະ ຄາດໝາຍລວມ**

(1) ອັດຕາສ່ວນຂອງການຈັດຊື້-ຈັດຈ້າງສີຂຽວ ສໍາລັບຜະລິດຕະພັນ ແລະ ການບໍລິການ ສໍາລັບຜະລິດຕະພັນສີຂຽວ ແລະ ການບໍລິການມີຢູ່ໃນຕະຫຼາດໂດຍມີການກໍານົດຄາດໝາຍລວມເປັນອັດຕາສ່ວນໃຫ້ເພີ່ມຂຶ້ນ 50% ໃນປີ 2025 ຂອງຈໍານວນການຈັດຊື້-ຈັດຈ້າງ; 50% ໃນປີ 2025 ຂອງປະລິມານ/ມູນຄ່າຂອງຜະລິດຕະພັນ ແລະ ການບໍລິການທີ່ຈັດຊື້-ຈັດຈ້າງ.

(2) ອັດຕາສ່ວນຂອງຜະລິດຕະພັນທີ່ຜະລິດ ແລະ ການບໍລິການພາຍໃນປະເທດທີ່ເປັນສີຂຽວ ຫຼື ເປັນມິດກັບສິ່ງແວດລ້ອມຕາມມາດຕະຖານສີຂຽວຖືກສ້າງຂຶ້ນໂດຍມີການກຳນົດຄາດໝາຍລວມ ເປັນອັດຕາສ່ວນເພີ່ມຂຶ້ນ 50% ໃນປີ 2025 ຂອງປະລິມານ/ມູນຄ່າຂອງຜະລິດຕະພັນທີ່ຜະລິດ ແລະ ການບໍລິການທີ່ສະໜອງໃຫ້.

**ເປົ້າໝາຍລວມທີ 3:** ການບໍລິໂພກຜະລິດຕະພັນ ແລະ ການບໍລິການສີຂຽວເພີ່ມຂຶ້ນ.

- **ຕົວຊີ້ວັດ ແລະ ຄາດໝາຍລວມ**

ອັດຕາສ່ວນການບໍລິໂພກພາຍໃນຂອງຜະລິດຕະພັນ ແລະ ການບໍລິການ ທີ່ມີຜະລິດຕະພັນ ແລະ ການບໍລິການສີຂຽວຢູ່ໃນຕະຫຼາດແມ່ນການບໍລິໂພກສີຂຽວໂດຍມີການກຳນົດເປົ້າໝາຍລວມເປັນອັດຕາເພີ່ມຂຶ້ນ 50% ໃນປີ 2025 ຂອງປະລິມານ/ມູນຄ່າຂອງຜະລິດຕະພັນ ແລະ ການບໍລິການທີ່ບໍລິໂພກ.

## IV. ຍຸດທະວິທີຫຼັກ, ຕົວຊີ້ວັດ, ຄາດໝາຍ ແລະ ການດຳເນີນການ ພ້ອມດ້ວຍພາກສ່ວນຈັດຕັ້ງປະຕິບັດ.

- **ຍຸດທະວິທີຫຼັກທີ 1: ການປັບປຸງກົດໝາຍ ແລະ ການສ້າງກົດລະບຽບ ແລະ ລະບຽບການທີ່ຈຳເປັນ.**

- **ຕົວຊີ້ວັດ ແລະ ຄາດໝາຍຫຼັກ:** ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດໄດ້ຮັບການປັບປຸງ ແລະ ກົດລະບຽບ ແລະ ລະບຽບການໄດ້ຮັບການສ້າງຂຶ້ນພາຍໃນປີ 2022.
- **ການຈັດຕັ້ງປະຕິບັດເພື່ອໃຫ້ບັນລຸໄດ້:**

**1.1. ປັບປຸງບົດແນະນຳການຈັດຊື້-ຈັດຈ້າງພາກລັດໃຫ້ກວມເອົາວຽກງານການຈັດຊື້-ຈັດຈ້າງສີຂຽວພາກລັດ.**

- ຕົວຊີ້ວັດ ແລະ ຄາດໝາຍ: ປັບປຸງສຳເລັດພາຍໃນ 2023;
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ໂດຍການສະໜັບສະ ໜູນຈາກ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ໜ່ວຍປະຕິບັດງານດ້ານວິຊາການຂອງວຽກງານການຈັດຊື້-ຈັດຈ້າງສີຂຽວພາກລັດ ແລະ ກົມກົດໝາຍ ກະຊວງຍຸດຕິທຳ;

**1.2. ການແກ້ໄຂຄຳແນະນຳ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດໃຫ້ປະກອບມີວຽກຈັດຊື້-ຈັດຈ້າງສີຂຽວພາກລັດ.**

- ຕົວຊີ້ວັດ ແລະ ຄາດໝາຍ: ປັບປຸງສຳເລັດພາຍໃນ 2023;
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ໂດຍການສະໜັບສະ ໜູນຈາກ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ໜ່ວຍປະຕິບັດງານດ້ານວິຊາການຂອງວຽກງານການຈັດຊື້-ຈັດຈ້າງສີຂຽວພາກລັດ ແລະ ກົມກົດໝາຍ ກະຊວງຍຸດຕິທຳ;

**1.3. ການສະແດງອອກຢ່າງຈະແຈ້ງ ກ່ຽວກັບ ນະໂຍບາຍ ການບໍລິໂພກ ແລະ ການຜະລິດແບບຍືນຍົງ ລວມທັງການຈັດຊື້-ຈັດຈ້າງສີຂຽວພາກລັດ ໃນການປັບປຸງນະໂຍບາຍ ແລະ ຍຸດທະສາດແຫ່ງຊາດ.**

- ຕົວຊີ້ວັດ ແລະ ຄາດໝາຍ: ສຳເລັດໃນປີ 2023.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກະຊວງການເງິນ ໂດຍການສະໜັບສະໜູນຈາກ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ກະຊວງແຜນການ ແລະ ການລົງທຶນ;

- **ຍຸດທະວິທີຫຼັກທີ 2: ການປັບປຸງລະບົບການຈັດຊື້-ຈັດຈ້າງພາກລັດ.**

- **ຕົວຊີ້ວັດ ແລະ ຄາດໝາຍຫຼັກ:** ລະບົບການຈັດຊື້-ຈັດຈ້າງພາກລັດຖືກປັບປຸງໃຫ້ກວມເອົາວຽກງານການຈັດຊື້-ຈັດຈ້າງສີຂຽວພາກລັດ ພາຍໃນ 2024.
- **ການຈັດຕັ້ງປະຕິບັດເພື່ອໃຫ້ບັນລຸໄດ້:**

**2.1. ການຈັດຕັ້ງປະຕິບັດລະບົບການຈັດຊື້-ຈັດຈ້າງສີຂຽວພາກລັດທັນສະໄໝ ລວມທັງຂໍ້ມູນກ່ຽວກັບມາດຖະຖານສີຂຽວ.**

- ຕົວຊີ້ວັດ ແລະ ຄາດໝາຍ: ຈັດຕັ້ງປະຕິບັດໃນປີ 2024;

- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ໂດຍການສະໜັບສະໜູນຈາກ ກະຊວງເຕັກໂນໂລຊີ ແລະ ການສື່ສານ;

**2.2. ການທົດລອງລະບົບການຈັດຊື້-ຈັດຈ້າງສີຂຽວພາກລັດທັນສະໄໝ ລວມທັງຂໍ້ມູນກ່ຽວກັບມາດຖະຖານສີຂຽວ.**

- ຕົວຊີ້ວັດ ແລະ ຄາດໝາຍ: ຈັດຕັ້ງປະຕິບັດໃນປີ 2024;
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ໂດຍການສະໜັບສະໜູນຈາກ ກະຊວງເຕັກໂນໂລຊີ ແລະ ການສື່ສານ.

**2.3. ການອຳນວຍຄວາມສະດວກໃຫ້ແກ່ຜູ້ປະມູນ.**

- ຕົວຊີ້ວັດ ແລະ ຄາດໝາຍ: 2022;
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ອີງການຈັດຕັ້ງລັດທັງໝົດ.

**2.4. ການກະກຽມສະຖາບັນເພື່ອການສ້າງ ແລະ ການປະຕິບັດ ການຈັດຊື້-ຈັດຈ້າງສີຂຽວພາກລັດ.**

- ຕົວຊີ້ວັດ ແລະ ຄາດໝາຍ: 2022;
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ໂດຍການສະໜັບສະໜູນຈາກ: ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງເຕັກໂນໂລຊີ ແລະ ການສືສານ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງສາທາລະນະສຸກ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

➢ **ຍຸດທະວິທີຫຼັກທີ 3: ການສ້າງລະບົບການຕິດສະຫຼາກສິ່ງແວດລ້ອມ.**

- **ຕົວຊີ້ວັດ ແລະ ຄາດໝາຍຫຼັກ:** ລະບົບ ສະຫຼາກສິ່ງແວດລ້ອມຖືກສ້າງຕັ້ງຂຶ້ນໃນປີ 2024
- **ການຈັດຕັ້ງປະຕິບັດເພື່ອໃຫ້ບັນລຸໄດ້:**

**3.1. ການຮັບຮອງເອົາສະຫຼາກສິ່ງແວດລ້ອມຂອງສາກົນ ສຳລັບ ຜະລິດຕະພັນ/ບໍລິການທີ່ນຳເຂົ້າ (ຕ້ອງດຳເນີນການໃຫ້ສຳເລັດກ່ອນ ຍຸດທະວິທີຫຼັກທີ 1 ຈຶ່ງສາມາດເລີ່ມດຳເນີນການໄດ້).**

- ຕົວຊີ້ວັດ ແລະ ຄາດໝາຍ: ຂັ້ນຕອນການຮັບຮອງເອົາສະຫຼາກສິ່ງແວດລ້ອມຂອງສາກົນ ສາລັບ ຜະລິດຕະພັນ ແລະ ການບໍລິການ ນຳເຂົ້າໄດ້ຮັບການອະນຸມັດຈາກກະຊວງອຸດສາຫະກຳ ແລະ ການຄ້າ;
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມມາດຕະຖານ ແລະ ວັດແທກ-ສູນຢັ້ງຢືນມາດຕະຖານ ແລະ ຄຸນນະພາບແຫ່ງຊາດ ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍການສະໜັບສະໜູນຈາກ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**3.2. ການພັດທະນາລະບົບການຕິດສະຫຼາກສິ່ງແວດລ້ອມແລະ ຄູ່ມືລວມເຖິງເກນ/ມາດຕະຖານຂອງຜະລິດຕະພັນ ແລະ ການບໍລິການສີຂຽວ.**

- ຕົວຊີ້ວັດ ແລະ ຄາດໝາຍ: ຄຳແນະນຳ ສຳລັບຜະລິດຕະພັນທ້ອງຖິ່ນ 1 ສະບັບ, ຄຳແນະນຳສຳລັບຜະລິດຕະພັນນຳເຂົ້າ 1 ສະບັບ ແລະ ຄຳແນະນຳສຳລັບການບໍລິການ 1 ສະບັບ;
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ໜ່ວຍປະຕິບັດງານວິຊາການ ກ່ຽວກັບ ການສ້າງສະຫຼາກສິ່ງແວດລ້ອມ (ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ), ກະຊວງໂຍທາທິການ ແລະ ຂົນສົ່ງ ແລະ ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ;

**3.3. ການຢັ້ງຢືນຜະລິດຕະພັນສີຂຽວອອກໃຫ້ຜະລິດຕະພັນທົດລອງພາຍໃນ/ນຳເຂົ້າລວມເຖິງການບໍລິການສີຂຽວ.**

- ຕົວຊີ້ວັດ ແລະ ຄາດໝາຍ: ຢ່າງໜ້ອຍ 3 ຜະລິດຕະພັນ/ 1 ການບໍລິການ ທີ່ໄດ້ຮັບການຢັ້ງຢືນຕໍ່ປີ ເລີ່ມແຕ່ປີ 2023 ຫາ 2030.

- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມມາດຕະຖານ ແລະ ວັດແທກ ກະຊວງອຸດສາຫະກຳ ແລະ ການຄ້າ.

**3.4. ການເຜີຍແຜ່ຂໍ້ມູນ-ຂ່າວສານ ແລະ ຄຳແນະນຳ ກ່ຽວກັບສະຫຼາກສີຂຽວ.**

- ຕົວຊີ້ວັດ ແລະ ຄາດໝາຍ: ຢ່າງໜ້ອຍ 3 ຜະລິດຕະພັນ/ 1 ການບໍລິການ ທີ່ໄດ້ຮັບການຢັ້ງຢືນຕໍ່ປີ ເລີ່ມແຕ່ປີ 2023 ຫາ 2030.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ໂຄງການສົ່ງເສີມການບໍລິໂພກ ແລະ ການຜະລິດແບບຍືນຍົງຢູ່ໃນ 5 ປະເທດຂອງອາຊີ.

**3.5. ການສ້າງຕັ້ງລະບົບການທົດສອບ/ການຢັ້ງຢືນຜະລິດຕະພັນ ແລະ ການບໍລິການສີຂຽວ.**

- ຕົວຊີ້ວັດ ແລະ ຄາດໝາຍ: ຫ້ອງທົດລອງ 1 ແຫ່ງປະຕິບັດຕາມ ISO/IEC 17025 ຖືກສ້າງຕັ້ງຂຶ້ນໃນປີ 2023-ໂຄງການລະບົບການຢັ້ງຢືນ/ ລະບົບການຢັ້ງຢືນຜະລິດຕະພັນ ແລະ ການບໍລິການສີຂຽວ (ISO / IEC 17065 ສຳລັບການຮັບຮອງລະບົບ ແລະ ISO 14024-ສຳລັບ ສະຫຼາກສິ່ງແວດລ້ອມ ປະເພດ 1 ແມ່ນພັດທະນາໂດຍກະຊວງອຸດສາຫະກຳ ແລະ ການຄ້າ.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມມາດຕະຖານ ແລະ ວັດແທກ ກະຊວງອຸດສາຫະກຳ ແລະ ການຄ້າ.

**3.6. ສ້າງຕັ້ງຄະນະປະຕິບັດງານ ຫຼື ຄະນະຮັບຜິດຊອບການຢັ້ງຢືນການຕິດສະຫຼາກຜະລິດຕະພັນ ແລະ ການບໍລິການສີຂຽວ.**

- ຕົວຊີ້ວັດ ແລະ ຄາດໝາຍ: ຖືກສ້າງຂຶ້ນໃນປີ 2025
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກະຊວງອຸດສາຫະກຳ ແລະ ການຄ້າ ສະໜັບສະໜູນໂດຍ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງການເງິນ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະພາກສ່ວນກ່ຽວຂ້ອງ.

**3.7. ການສ້າງຕັ້ງລະບົບຕິດຕາມກວດກາ ແລະ ປະເມີນຜົນ.**

- ຕົວຊີ້ວັດ ແລະ ຄາດໝາຍ: ຖືກສ້າງຂຶ້ນໃນປີ 2022
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມອຸດສາຫະກຳ ແລະ ຫັດຖະກຳ, ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ, ກົມສົ່ງເສີມ ແລະ ປະຢັດພະລັງງານ ແລະ ສະຖາບັນຄົ້ນຄວ້າພະລັງງານ ແລະ ບໍ່ແຮ່ ກະຊວງພະລັງງານ ແລະ ບໍ່ແຮ່.

➢ **ຍຸດທະວິທີຫຼັກທີ 4: ສົ່ງເສີມການຜະລິດ ແລະ ບໍລິໂພກຜະລິດຕະພັນ ແລະ ການບໍລິການສີຂຽວ.**

- **ຕົວຊີ້ວັດ ແລະ ຄາດໝາຍຫຼັກ:** ການຜະລິດ ແລະ ການບໍລິໂພກຜະລິດຕະພັນ ແລະ ການບໍລິການສີຂຽວ ເພີ່ມຂຶ້ນ 50% ໃນປີ 2030.
- **ການຈັດຕັ້ງປະຕິບັດເພື່ອໃຫ້ບັນລຸໄດ້:**

**4.1. ການເພີ່ມຂຶ້ນຂອງການນຳເອົາສິ່ງເສດເຫຼືອມາຜະລິດຄືນໃໝ່.**

- ຕົວຊີ້ວັດ ແລະ ຄາດໝາຍ: ເພີ່ມຂຶ້ນ 15% ໃນປີ 2025.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມອຸດສາຫະກຳ ແລະ ຫັດຖະກຳ ກະຊວງອຸດສາຫະກຳ ແລະ ການຄ້າ ສະໜັບສະໜູນໂດຍ ກົມສິ່ງແວດລ້ອມ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ອົງການພັດທະນາຕົວເມືອງ (UDA), ອົງການຄຸ້ມຄອງບໍລິຫານນະຄອນຫຼວງວຽງຈັນ (VCOM) ແລະ ກະຊວງແຜນການ ແລະ ການລົງທຶນ.

**4.2. ສ້າງຄວາມສາມາດແຂ່ງຂັນໃຫ້ຜູ້ຜະລິດສີຂຽວ.**

- ຕົວຊີ້ວັດ ແລະ ຄາດໝາຍ: ທັນທີ

- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມອຸດສາຫະກຳ ແລະ ຫັດຖະກຳ ກະຊວງອຸດສາຫະກຳ ແລະ ການຄ້າ ສະໜັບສະໜູນໂດຍ ກົມສິ່ງແວດລ້ອມ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

**4.3. ເພີ່ມທະວີການຜະລິດຜະລິດຕະພັນ ແລະ ການບໍລິໂພກຜະລິດຕະພັນສີຂຽວ**

- ຕົວຊີ້ວັດ ແລະ ຄາດໝາຍ: ເພີ່ມຂຶ້ນ 10% ໃນປີ 2025.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມອຸດສາຫະກຳ ແລະ ຫັດຖະກຳ ກະຊວງອຸດສາຫະກຳ ແລະ ການຄ້າ ສະໜັບສະໜູນໂດຍ ກົມສິ່ງແວດລ້ອມ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

**4.4. ການປັບປຸງແນວທາງສົ່ງເສີມຜະລິດຕະພັນ ແລະ ການບໍລິການສີຂຽວ (Green product directory)**

- ຕົວຊີ້ວັດ/ຄາດໝາຍ: ປຶ້ມແນະນຳຂະແໜງບໍລິການ 1 ສະບັບ ແລະ ປຶ້ມແນະນຳຜູ້ຜະລິດ 1 ສະບັບ
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມອຸດສາຫະກຳ ແລະ ຫັດຖະກຳ ກະຊວງອຸດສາຫະກຳ ແລະ ການຄ້າ ສະໜັບສະໜູນໂດຍ ກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

**4.5. ສ້າງຄວາມເຊື່ອໝັ້ນ/ຄວາມໄວ້ວາງໃຈຂອງຜູ້ບໍລິໂພກ.**

- ຕົວຊີ້ວັດ/ຄາດໝາຍ: ທັນທີ
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມອຸດສາຫະກຳ ແລະ ຫັດຖະກຳ ກະຊວງອຸດສາຫະກຳ ແລະ ການຄ້າ ສະໜັບສະໜູນໂດຍ ກົມປູກຝັງ ກະຊວງກະສິກຳ ແລະ ປ່າໄມ້, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງເຕັກໂນໂລຊີ ແລະ ການສື່ສານ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

**4.6. ຫຼຸດຜ່ອນຕົ້ນທຶນການຜະລິດຜະລິດຕະພັນສີຂຽວ.**

- ຕົວຊີ້ວັດ ແລະ ຄາດໝາຍ: ທັນທີ
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມພາສີ ກະຊວງການເງິນ ສະໜັບສະໜູນໂດຍ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**4.7. ຈັດຕັ້ງຜັນຂະຫຍາຍປຶ້ມບັນທຶກຄວາມເຂົ້າໃຈທີ່ລັດຖະບານໄດ້ເຮັດກັບພາກເອກະຊົນກ່ຽວກັບການຜະລິດ ແລະ ການບໍລິໂພກສີຂຽວທີ່ມີຢູ່ແລ້ວ ແລະ ເພີ່ມຈຳນວນປຶ້ມບັນທຶກໃຫ້ຫຼາຍຂຶ້ນ.**

- ຕົວຊີ້ວັດ ແລະ ຄາດໝາຍ: ປຶ້ມບັນທຶກຄວາມເຂົ້າໃຈ ການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ/ຂໍ້ຕົກລົງທີ່ສ້າງຂຶ້ນໃນປີ 2023.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມອຸດສາຫະກຳ ແລະ ຫັດຖະກຳ ກະຊວງອຸດສາຫະກຳ ແລະ ການຄ້າ, ສະໜັບສະໜູນໂດຍ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**4.8. ເພີ່ມທະວີການຮັບຮອງຜະລິດຕະພັນນຳເຂົ້າສີຂຽວ**

- ຕົວຊີ້ວັດ ແລະ ຄາດໝາຍ: 10% ໃນປີ 2025.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມສິ່ງແວດລ້ອມ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ສະໜັບສະໜູນໂດຍ ກົມມາດຕະຖານ ແລະ ວັດແທກ ກະຊວງອຸດສາຫະກຳ ແລະ ການຄ້າ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາ ແລະ ກະຊວງການເງິນ.

**4.9. ເພີ່ມເພີ່ມທະວີການສົ່ງອອກຜະລິດຕະພັນສີຂຽວພາຍໃນປະເທດ**

- ຕົວຊີ້ວັດ/ຄາດໝາຍ: 07% ພາຍໃນປີ 2025.

- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມການນຳເຂົ້າ ແລະ ສົ່ງອອກ ກະຊວງອຸດສາຫະກຳ ແລະ ການຄ້າ ສະໜັບສະໜູນໂດຍ ກະຊວງການເງິນ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

**4.10. ເພີ່ມຈຳນວນຮ້ານຂາຍສິນຄ້າຢູ່ບັນດາແຂວງພາກກາງ ແລະ ທ້ອງຖິ່ນທີ່ຂາຍສິນຄ້າສີຂຽວ**

- ຕົວຊີ້ວັດ/ຄາດໝາຍ: 07% ໃນທ້ອງຖິ່ນ ແລະ 10% ໃນສູນກາງພາຍໃນປີ 2025.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມການຄ້າພາຍໃນ, ກົມສົ່ງເສີມທຸລະກິດຂະໜາດກາງ ແລະ ນ້ອຍ ກະຊວງອຸດສາຫະກຳ ແລະ ການຄ້າ ສະໜັບສະໜູນໂດຍກະຊວງການເງິນ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

**4.11. ລາງວັນການຜະລິດສີຂຽວ/ການບໍລິໂພກສີຂຽວ**

- ຕົວຊີ້ວັດ ແລະ ຄາດໝາຍ: ມອບລາງວັນໃຫ້ພາກລັດ ແລະ ເອກະຊົນ-ປີລະຄັ້ງ ເລີ່ມປີ 2025.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມການຄ້າພາຍໃນ, ກົມສົ່ງເສີມທຸລະກິດຂະໜາດກາງ ແລະ ນ້ອຍ ກະຊວງອຸດສາຫະກຳ ແລະ ການຄ້າ ສະໜັບສະໜູນໂດຍກະຊວງການເງິນ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

**4.12. ສະໜອງສິດທິພິເສດດ້ານພາສີໃຫ້ແກ່ການລົງທຶນທີ່ເປັນມິດກັບສິ່ງແວດລ້ອມ, ຜະລິດຜະລິດຕະພັນສີຂຽວ, ການບໍລິການສີຂຽວ**

- ຕົວຊີ້ວັດ/ຄາດໝາຍ: ຈັດຕັ້ງປະຕິບັດໃນປີ 2022.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມພາສີ ກະຊວງການເງິນ ສະໜັບສະໜູນໂດຍ ກົມອຸດສາຫະກຳ ແລະ ຫັດຖະກຳ ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

**4.13. ການຈັດບຸລິມະສິດຂອງຜະລິດຕະພັນສີຂຽວ ແລະການບໍລິການສີຂຽວເພື່ອການສົ່ງເສີມ ຈາກປະລິມານການຂາຍ, ມູນຄ່າການຂາຍ ແລະ ຄວາມນິຍົມຂອງຜູ້ບໍລິໂພກ ແລະອື່ນໆ.**

- ຕົວຊີ້ວັດ ແລະ ຄາດໝາຍ: ສຳເລັດໃນປີ 2022.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມຄຸ້ມຄອງຊັບສິນແຫ່ງລັດ, ກົມພາສີ ກະຊວງການເງິນ, ສະໜັບສະໜູນໂດຍ ກົມອຸດສາຫະກຳ ແລະ ຫັດຖະກຳ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງກະສິກຳ ແລະ ປ່າໄມ້, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

➢ **ຍຸດທະວິທີຫຼັກທີ 5: ການສ້າງຈິດສານຶກ, ການສ້າງຄວາມເຂັ້ມແຂງ ແລະ ການເຜີຍແຜ່ຂໍ້ມູນ-ຂ່າວສານ.**

- **ຕົວຊີ້ວັດ ແລະ ຄາດໝາຍຫຼັກ:** ບັນດາອົງການຈັດຕັ້ງລັດຮັບຮູ້ ແລະ ປະຕິບັດການຈັດຊື້-ຈັດຈ້າງສີຂຽວພາກລັດເພີ່ມຂຶ້ນເຊັ່ນດຽວກັບພາກເອກະຊົນ.
- **ການຈັດຕັ້ງປະຕິບັດເພື່ອໃຫ້ບັນລຸໄດ້:**

**5.1. ເພີ່ມຈິດສຳນຶກຂອງອົງການຈັດຕັ້ງລັດໃນສູນກາງ ແລະ ທ້ອງຖິ່ນກ່ຽວກັບການບໍລິໂພກສີຂຽວ.**

- ຕົວຊີ້ວັດ ແລະ ຄາດໝາຍ: ບັນດາອົງການຈັດຕັ້ງລັດຂັ້ນສູນກາງ ແລະ ທ້ອງຖິ່ນຂອງ 18 ແຂວງ, ຮອດປີ 2024.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ສະໜັບສະໜູນໂດຍ ກົມອຸດສາຫະກຳ ແລະ ຫັດຖະກຳ ກະຊວງອຸດສາຫະກຳ ແລະ ການຄ້າ, ກົມແຜນການ ແລະ ການເງິນ, ກົມສິ່ງແວດລ້ອມ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພະແນກສົ່ງເສີມຜະລິດຕະພັນລາວ ແລະ ວາງສະແດງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

**5.2. ເຮັດໃຫ້ລັດຖະບານສູນກາງ ແລະ ທ້ອງຖິ່ນຮັບຮູ້ ກ່ຽວກັບ ການຈັດຊື້-ຈັດຈ້າງສີຂຽວພາກລັດ.**

- ຕົວຊີ້ວັດ ແລະ ຄາດໝາຍ: ອົງການຈັດຕັ້ງລັດຂັ້ນສູນກາງ ແລະ ທ້ອງຖິ່ນຂອງ 18 ແຂວງ, ຮອດປີ 2023.

- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ສະໜັບສະໜູນ ໂດຍ ທຸກອົງການຈັດຕັ້ງລັດທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ.

**5.3. ເພີ່ມການຝຶກອົບຮົມພະນັກງານສູນກາງ ແລະ ທ້ອງຖິ່ນ.**

- ຕົວຊີ້ວັດ ແລະ ຄາດໝາຍ: ພະນັກງານຈາກສູນກາງ 380 ທ່ານ (38 ໜ່ວຍ, ພະນັກງານ 5 ທ່ານ/ໜ່ວຍ, 2 ປີ) ແລະ 3,000 ຈາກອົງການປົກຄອງແຂວງ.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ສະໜັບສະໜູນ ໂດຍ ກົມອຸດສາຫະກຳ ແລະ ຫັດຖະກຳ ກະຊວງອຸດສາຫະກຳ ແລະ ການຄ້າ, ກົມແຜນການ ແລະ ການເງິນ ແລະ ກົມສິ່ງແວດລ້ອມ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**5.4. ເພີ່ມທະວີຄວາມຮັບຮູ້ຂອງພາກເອກະຊົນກ່ຽວກັບການຈັດຊື້-ຈັດຈ້າງສີຂຽວພາກລັດ.**

- ຕົວຊີ້ວັດ ແລະ ຄາດໝາຍ: ເພີ່ມຂຶ້ນ 10% ໃນປີ 2025.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ສະໜັບສະໜູນ ໂດຍ ກົມອຸດສາຫະກຳ ແລະ ຫັດຖະກຳ ກະຊວງອຸດສາຫະກຳ ແລະ ການຄ້າ, ກົມແຜນການ ແລະ ການເງິນ ແລະ ກົມສິ່ງແວດລ້ອມ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ແລະ ພະແນກສົ່ງເສີມຜະລິດຕະພັນ ແລະ ວາງສະແດງ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ.

**5.5. ການພັດທະນາເວັບໄຊ ຫຼື ແອັບພລິເຄຊັນສຳລັບລາຍຊື່ຮ້ານຄ້າສີຂຽວ/ສັບພະສິນຄ້າ/ການບໍລິການ ເພື່ອນຳສະເໜີຜະລິດຕະພັນ ແລະ ການບໍລິການສີຂຽວ.**

- ຕົວຊີ້ວັດ ແລະ ຄາດໝາຍ: ສຳເລັດ ໃນປີ 2025.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ສະໜັບສະໜູນ ໂດຍ ກົມອຸດສາຫະກຳ ແລະ ຫັດຖະກຳ ກະຊວງອຸດສາຫະກຳ ແລະ ການຄ້າ, ຫ້ອງການ, ກົມແຜນການ ແລະ ການເງິນ ແລະ ກົມສິ່ງແວດລ້ອມ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກພົວພັນສະມາຊິກ ແລະ ພະແນກອື່ນໆ ພາຍໃນ ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ກຸ່ມ ແລະ ສະມາຄົມນັກທຸລະກິດ.

**5.6. ການປັບປຸງບົດແນະນຳ ຫຼື ປຶ້ມຄູ່ມື ການຈັດຊື້ຈັດຈ້າງສີຂຽວພາກລັດເພື່ອສ້າງຄວາມເຊື່ອໝັ້ນໃຫ້ພະນັກງານຮັບຜິດຊອບຈັດຊື້-ຈັດຈ້າງຂອງບັນດາອົງການຈັດຕັ້ງລັດໃນການຈັດຕັ້ງປະຕິບັດການຈັດຊື້-ຈັດຈ້າງສີຂຽວພາກລັດ.**

- ຕົວຊີ້ວັດ ແລະ ຄາດໝາຍ: ສ້າງຂຶ້ນໃນປີ 2024.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ສະໜັບສະໜູນ ໂດຍ ກົມແຜນການ ແລະ ການເງິນ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກົມອຸດສາຫະກຳ ແລະ ຫັດຖະກຳ, ກາມົມການນຳເຂົ້າ ແລະ ສົ່ງອອກ, ກົມມາດຕະຖານ ແລະ ວັດແທກ ກະຊວງອຸດສາຫະກຳ ແລະ ການຄ້າ.

➢ **ຍຸດທະວິທີຫຼັກທີ 6: ການສ້າງລະບົບການລາຍງານ, ການຕິດຕາມ, ແລະ ປະເມີນຜົນ.**

- **ຕົວຊີ້ວັດ ແລະ ຄາດໝາຍຫຼັກ:** ການຈັດຊື້-ຈັດຈ້າງສີຂຽວພາກລັດໄດ້ຮັບການຕິດຕາມ, ປະເມີນຜົນ ແລະ ລາຍງານຜ່ານລະບົບທັນສະໄໝຂອງກະຊວງການເງິນເປັນປົກກະຕິ.
- **ການຈັດຕັ້ງປະຕິບັດເພື່ອໃຫ້ບັນລຸ:**

**6.1. ປັບປຸງ ແລະ ຈັດຕັ້ງປະຕິບັດລະບົບການລາຍງານ, ຕິດຕາມ ແລະ ປະເມີນຜົນການຈັດຊື້-ຈັດຈ້າງສີ ຂຽວພາກລັດແບບທັນສະໄໝຜ່ານລະບົບເວັບໄຊຈັດຊື້-ຈັດຈ້າງຂອງກະຊວງການເງິນ.**

- ຕົວຊີ້ວັດ ແລະ ຄາດໝາຍ: ສຳເລັດໃນປີ 2023.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ສະໜັບສະໜູນ ໂດຍ ກົມການຄ້າພາຍໃນ, ກົມການນຳເຂົ້າ ແລະ ສົ່ງອອກ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງພະລັງງານ

ແລະ ບໍ່ແຮ່, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ.

**6.2. ການສ້າງຖານຂໍ້ມູນຜະລິດຕະພັນ ແລະ ການບໍລິການສີຂຽວຜ່ານລະບົບອີເລັກໂຕຣນິກສຳລັບລະບົບການນຳເຂົ້າ-ສົ່ງອອກ ແລະ ດຳເນີນການທົດລອງນຳໃຊ້.**

- ຕົວຊີ້ວັດ ແລະ ຄາດໝາຍ: ສຳເລັດການສ້າງ ແລະ ທົດລອງນຳໃຊ້ໃນປີ 2023.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ສະໜັບສະໜູນໂດຍ ກົມການຄ້າພາຍໃນ, ກົມການນຳເຂົ້າ ແລະ ສົ່ງອອກ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ.

**6.3. ການເຊື່ອມຈອດລະບົບທີ່ມີຢູ່ໂດຍການເພີ່ມອົງປະກອບ/ລັກສະນະ ຂອງ ສິນຄ້າ ແລະ ບໍລິການສີຂຽວ.**

- ຕົວຊີ້ວັດ ແລະ ຄາດໝາຍ: ສຳເລັດໃນປີ 2023.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກົມຄຸ້ມຄອງຊັບສິນແຫ່ງລັດ ກະຊວງການເງິນ ສະໜັບສະໜູນໂດຍ ກົມການຄ້າພາຍໃນ, ກົມການນຳເຂົ້າ ແລະ ສົ່ງອອກ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງພະລັງງານ ແລະ ບໍ່ແຮ່, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ກະຊວງໂຍທາທິການ ແລະ ຂົນສົ່ງ.

➢ **ຍຸດທະວິທີຫຼັກທີ 7: ການຮ່ວມມື ແລະ ການສະໜັບສະໜູນຈາກສາກົນ**

- **ຕົວຊີ້ວັດ ແລະ ຄາດໝາຍຫຼັກ:** ການຮ່ວມມື ແລະ ການສະໜັບສະໜູນຈາກສາກົນເຊັ່ນ: ການຊ່ວຍເຫຼືອດ້ານວິຊາການ ແລະ ການເງິນເພີ່ມຂຶ້ນ.
- **ການຈັດຕັ້ງປະຕິບັດເພື່ອໃຫ້ບັນລຸ:**

**7.1. ປະຕິບັດ ແລະ ແລກປ່ຽນບົດຮຽນກັບອາຊຽນ, ພາກພື້ນ ແລະ ສາກົນ.**

- ຕົວຊີ້ວັດ ແລະ ຄາດໝາຍ: 10 ຄັ້ງ (ສຳລັບໂຄງການແລກປ່ຽນລະຫວ່າງປະເທດ 4 ຄັ້ງ ແລະ ກິດຈະກຳພາກພື້ນ 3 ຄັ້ງ, ກິດຈະກຳພາຍໃນປະເທດ 2 ຄັ້ງ).
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກະຊວງການເງິນ ໂດຍການສະໜັບສະໜູນຈາກ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ ແລະ ພາກສ່ວນອື່ນໆ.

**7.2. ໄດ້ຮັບການຊ່ວຍເຫຼືອດ້ານວິຊາການ ແລະ ການເງິນຈາກອົງການຈັດຕັ້ງສາກົນເພື່ອປະຕິບັດ ແລະ ສົ່ງເສີມການຈັດຊື້-ຈັດຈ້າງສີຂຽວພາກລັດ.**

- ຕົວຊີ້ວັດ ແລະ ຄາດໝາຍ: 3 ໂຄງການ 15.000.000 ໂດລາສະຫະລັດ ໃນປີ 2024.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍການສະໜັບສະໜູນຈາກ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ, ສະພາການຄ້າ ແລະ ອຸດສາຫະກຳແຫ່ງຊາດລາວ, ກະຊວງກະສິກຳ ແລະ ປ່າໄມ້ ແລະ ກະຊວງແຜນການ ແລະ ການລົງທຶນ.

**7.3. ການແລກປ່ຽນຂໍ້ມູນ-ຂ່າວສານ ແລະ ການຖ່າຍທອດເຕັກໂນໂລຊີທັນສະໄໝ.**

- ຕົວຊີ້ວັດ ແລະ ຄາດໝາຍ: ດຳເນີນການໃນປີ 2022.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໂດຍການສະໜັບສະໜູນຈາກ ກະຊວງອຸດສາຫະກຳ ແລະ ການຄ້າ, ກະຊວງການເງິນ.

**7.4. ສະໝັກເປັນສະມາຊິກຂອງອົງການຈັດຕັ້ງສາກົນທີ່ກ່ຽວຂ້ອງເຊັ່ນ: GEN-Global Eco-labelling Network, ເຄືອຂ່າຍການຈັດຊື້-ຈັດຈ້າງສີຂຽວພາກລັດ.**

- ຕົວຊີ້ວັດ ແລະ ຄາດໝາຍ: ໄດ້ຖືກຮັບເຂົ້າເປັນສະມາຊິກຂອງອົງການຈັດຕັ້ງກ່ຽວຂ້ອງ ກັບການຈັດຊື້-ຈັດຈ້າງສີຂຽວພາກລັດ/ສະຫຼາກສີຂຽວ.
- ພາກສ່ວນຈັດຕັ້ງປະຕິບັດຫຼັກ: ກະຊວງການເງິນ ແລະ ກະຊວງອຸດສາຫະກຳ ແລະ ການຄ້າ.

## V. ການຈັດຕັ້ງປະຕິບັດ

1. ຈັດຕັ້ງປະຕິບັດ ກິດຈະກຳບູລິມະສິດຂອງແຜນງານສະບັບນີ້ໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX (2021-2025), ຍຸດທະສາດການເຕີບໂຕສີຂຽວແຫ່ງຊາດຮອດປີ 2030 ແລະ ແຜນງານອື່ນໆທີ່ກ່ຽວຂ້ອງ;
2. ບັນດາກິດຈະກຳຍ່ອຍຂອງແຕ່ລະຍຸດທະວິທີແມ່ນຢູ່ໃນເອກະສານຊ້ອນທ້າຍຂອງແຜນດຳເນີນງານສະບັບນີ້;
3. ມອບໃຫ້ ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການຈັດຕັ້ງລັດ ສັງລວມ, ເຊື່ອມສານ ການຈັດຊື້-ຈັດຈ້າງສີຂຽວພາກລັດ ເຂົ້າໃນຍຸດທະສາດ, ແຜນດຳເນີນງານ ແລະ ແຜນການກ່ຽວຂ້ອງຂອງຕົນຕາມພາລະບົດບາດ ພ້ອມທັງສົ່ງເສີມການຈັດຕັ້ງປະຕິບັດ;
4. ງົບປະມານການຈັດຕັ້ງປະຕິບັດ
   - ການຈັດສັນງົບປະມານ ສຳລັບ ການຈັດຕັ້ງປະຕິບັດບັນດາກິດຈະກຳພາຍໃຕ້ແຜນງານສະບັບນີ້ແມ່ນມາຈາກ: ໂຄງການສົ່ງເສີມການບໍລິໂພກ ແລະ ການຜະລິດແບບຍືນຍົງຢູ່ໃນ 5 ປະເທດຂອງອາຊີ, ງົບປະມານຂອງລັດ, ການຊ່ວຍເຫຼືອເພື່ອການພັດທະນາ, ການລົງທຶນຈາກອົງການຈັດຕັ້ງພາຍໃນ ແລະ ສາກົນ ແລະ ນິຕິບຸກຄົນ ແລະ ອື່ນໆ;
   - ບັນດາກະຊວງ, ອົງການທຽບເທົ່າກະຊວງ, ອົງການຈັດຕັ້ງລັດຂັ້ນສູນກາງ ແລະ ທ້ອງຖິ່ນ ແມ່ນມີຄວາມຮັບຜິດຊອບໃນການຄຸ້ມຄອງງົບປະມານໃນການຈັດຕັ້ງປະຕິບັດກິດຈະກຳພາຍໃຕ້ແຜນງານສະບັບນີ້ ຕາມພາລະບົດບາດຂອງຕົນ.

## VI. ການຕິດຕາມກວດກາ ແລະ ການປະເມີນຜົນ

ກົມແຜນການ ແລະ ການເງິນ, ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນໃຈກາງໃນການປະສານສົມທົບກັບກະຊວງການເງິນ, ກະຊວງອຸດສາຫະກຳ ແລະ ການຄ້າ ແລະ ຂະແໜງການກ່ຽວຂ້ອງໃນການລາຍງານ, ການແລກປ່ຽນຂໍ້ມູນ-ຂ່າວສານ, ການສ້າງຄວາມສາມາດໃນການຕິດຕາມກວດກາ ແລະ ປະເມີນຜົນແຜນດຳເນີນງານການຈັດຊື້-ຈັດຈາງສີຂຽວພາກລັດ ຂອງ ສປປ ລາວ 2022-2025, ວິໄສທັດຮອດປີ 2030 ໃນຂອບເຂດທົ່ວປະເທດ.

**ລັດຖະມົນຕີ**

ນ.ບຸນຄຳ ວໍລະຈິດ

**ເອກະສານຊ້ອນທ້າຍ 1: ລາຍລະອຽດຂອງບັນດາກິດຈະກຳຍ່ອຍພາຍໃຕ້ ແຜນດຳເນີນງານການຈັດຊື້-ຈັດຈ້າງສີຂຽວພາກລັດຂອງ ສປປ ລາວ 2022-2025, ວິໄສທັດຮອດປີ 2030**

| ຍຸດທະວິທີຫຼັກ | | ຕົວຊີ້ວັດ ແລະ ຄາດໝາຍຫຼັກ | ການດຳເນີນການເພື່ອໃຫ້ບັນລຸໄດ້ | | ຕົວຊີ້ວັດ ແລະ ຄາດໝາຍ | ຜູ້ທີ່ມີສ່ວນກ່ຽວຂ້ອງ | ເລີ່ມ | ກິດຈະກຳຍ່ອຍ | ຄວາມຕ້ອງການດ້ານຊັບພະຍາກອນ (ບຸກຄະລາກອນ ແລະ ການເງິນ) |
|---|---|---|---|---|---|---|---|---|---|
| S1 | ການປັບປຸງກົດໝາຍ ແລະ ການສ້າງກົດລະບຽບ ແລະ ລະບຽບການທີ່ຕ້ອງການ | ກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງພາກລັດໄດ້ຮັບການປັບປຸງ ແລະ ປັບປຸງລະບຽບການຕ່າງໆ | S1.1 | ປັບປຸງບົດແນະນຳການຈັດຊື້-ຈັດຈ້າງພາກລັດໃຫ້ກວມເອົາການຈັດຊື້-ຈັດຈ້າງສີຂຽວພາກລັດ | ຖືກປັບປຸງສຳເລັດພາຍໃນ 2023 | ກົມຄຸ້ມຄອງຊັບສິນແຫ່ງລັດ ກງ ສະໜັບສະໜູນໂດຍ ກຊສ, ໜ່ວຍປະຕິບັດງານດ້ານວິຊາການຂອງການຈັດຊື້-ຈັດຈ້າງສີຂຽວພາກລັດ, ກົມກົດໝາຍ ກະຊວງຍຸຕິທຳ | 2023 | 1.1.1 ການອ້າງອີງເຖິງຜະລິດຕະພັນສີຂຽວທີ່ໄດ້ຮັບການຢັ້ງຢືນເປັນຂໍ້ກຳນົດດ້ານສິ່ງແວດລ້ອມລວມຢູ່ໃນພາກທີ 3.2 ກ່ຽວກັບຂໍ້ກຳນົດດ້ານວິຊາການສຳລັບສິນຄ້າ ແລະ ວຽກງານຂອງຄູ່ມືການຈັດຊື້-ຈັດຈ້າງ.<br>1.1.2 ຜະລິດຕະພັນ ແລະ ການບໍລິການສີຂຽວຄວນຖືກພິຈາລະນາວ່າມີຄຸນນະພາບສູງກວ່າ ແລະ ຄວນລະບຸໄວ້ໃນ ຫຼື ເຊື່ອມເຂົ້າໃນກົດໝາຍວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ | - ນັກກົດໝາຍ,<br>- ຊັບພະຍາກອນມະນຸດ ແລະ ການເງິນຈາກບັນດາກະຊວງ<br>- ໂຄງການສະໜັບສະໜູນໃນການສະໜອງຜູ້ຊ່ຽວຊານເພື່ອແນະນຳການປັບປຸງຂໍ້ຄວາມໃນນະໂຍບາຍ |
| | | | S1.2 | ການແກ້ໄຂຄຳແນະນຳການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດໃຫ້ປະກອບມີການຈັດຊື້-ຈັດຈ້າງສີຂຽວພາກລັດ. | ການປັບປຸງສຳເລັດໃນປີ 2023 | ກົມຄຸ້ມຄອງຊັບສິນແຫ່ງລັດ ກງ ສະໜັບສະໜູນໂດຍ , ກຊສ, ໜ່ວຍປະຕິບັດງານດ້ານວິຊາການວຽກງານການຈັດຊື້-ຈັດຈ້າງສີຂຽວພາກ | 2023 | 1.2.1 ການອ້າງອີງເຖິງຜະລິດຕະພັນສີຂຽວທີ່ໄດ້ຮັບການຮັບຮອງເປັນຂໍ້ກຳນົດດ້ານສິ່ງແວດລ້ອມລວມຢູ່ໃນພາກທີ 3.2 ກ່ຽວກັບຂໍ້ກຳນົດດ້ານວິຊາການສຳລັບສິນຄ້າ ແລະ ວຽກງານຂອງຄູ່ມືການຈັດຊື້-ຈັດຈ້າງ.<br>1.2.2 ຜະລິດຕະພັນ ແລະ ການບໍລິການສີຂຽວຄວນຖືກພິຈາລະນາວ່າມີຄຸນນະພາບສູງກວ່າ ແລະ ຄວນລະບຸໄວ້ໃນ | - ນັກກົດໝາຍ,<br>- ຊັບພະຍາກອນມະນຸດ ແລະ ການເງິນຈາກບັນດາກະຊວງ<br>- ໂຄງການສະໜັບສະໜູນໃນການສະໜອງຜູ້ຊ່ຽວຊານເພື່ອທົບທວນ ແລະ ໃຫ້ຄຳແນະນຳສຳ |

| | | | | | | | | | |
|---|---|---|---|---|---|---|---|---|---|
| | | | | | | ລັດ, ກົມກົດໝາຍ ກະຊວງຍຸຕິທຳ | | ຫຼື ເຊື່ອມສານເຂົ້າໃນກົດໝາຍວ່າດ້ວຍການຈັດຊື້ອຈັດຈ້າງດ້ວຍທຶນຂອງລັດ. | ລັບການປັບປຸງບົດແນະນຳ |
| | | | S1.3 | ການສະແດງອອກຢ່າງຈະແຈ້ງກ່ຽວກັບ ນະໂຍບາຍການບໍລິໂພກ ແລະ ການຜະລິດແບບຍືນຍົງລວມທັງການຈັດຊື້-ຈັດຈ້າງສີຂຽວພາກລັດໃນການປັບປຸງນະໂຍບາຍ ແລະ ຍຸດທະສາດແຫ່ງຊາດ. | ສຳເລັດໃນປີ 2023 | ກງ ໂດຍການສະໜັບສະໜູນຂອງ ກຊສ ແລະ ກຜທ | 2023 | 1.3.1 ກວດກາ ແລະ ປະເມີນຜົນການຈັດຕັ້ງປະຕິບັດນະໂຍບາຍການບໍລິໂພກ ແລະ ການຜະລິດແບບຍືນຍົງລວມທັງການຈັດຊື້-ຈັດຈ້າງສີຂຽວພາກລັດ.<br>1.3.2 ເຊື່ອມສານການຜະລິດ ແລະ ການບໍລິໂພກແບບຍືນຍົງ ແລະ ການຈັດຊື້-ຈັດຈ້າງສີຂຽວເຂົ້າໃນນະໂຍບາຍ ແລະຍຸດທະສາດແຫ່ງຊາດທີ່ກ່ຽວຂ້ອງຕາມຄວາມເໝາະສົມ.<br>1.3.3 ລວມເອົາ ການບໍລິໂພກ ແລະການຜະລິດແບບຍືນຍົງ ລວມທັງການຈັດຊື້-ຈັດຈ້າງສີຂຽວພາກລັດ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດຄັ້ງທີ X (ໂດຍ ກຜທ). | - ຊັບພະຍາກອນມະນຸດ ແລະ ການເງິນຈາກບັນດາກະຊວງ<br>- ຊ່ອງທາງດ້ານການເງິນອື່ນໆ |

| ຍຸດທະວິທີຫຼັກ | | ຕົວຊີ້ວັດ ແລະ ຄາດໝາຍຫຼັກ | ການດຳເນີນການເພື່ອໃຫ້ບັນລຸໄດ້ | | ຕົວຊີ້ວັດ ແລະ ຄາດໝາຍ | ຜູ້ທີ່ມີສ່ວນກ່ຽວຂ້ອງ | ເລີ່ມ | ກິດຈະກຳຍ່ອຍ | ຄວາມຕ້ອງການດ້ານຊັບພະຍາກອນ (ບຸກຄະລາກອນ ແລະ ການເງິນ) |
|---|---|---|---|---|---|---|---|---|---|
| S2 | ການປັບປຸງລະບົບການຈັດຊື້-ຈັດຈ້າງພາກລັດ | ລະບົບການຈັດຊື້-ຈັດຈ້າງພາກລັດຖືກປັບປຸງເພື່ອກວມເອົາ GPP ໃນປີ 2024 | S2.1 | ການຈັດຕັ້ງປະຕິບັດລະບົບການຈັດຊື້-ຈັດຈ້າງສີຂຽວພາກລັດທັນສະໄໝລວມທັງຂໍ້ມູນກ່ຽວກັບມາດຖະຖານສີຂຽວ | ຈັດຕັ້ງປະຕິບັດໃນປີ 2024 | ກົມຄຸ້ມຄອງຊັບສິນແຫ່ງລັດ ກງ ສະໜັບສະໜູນໂດຍ ກຕສ | 2023 | ການປັບປຸງລະບົບການຈັດຕັ້ງປະຕິບັດລະບົບການຈັດຊື້-ຈັດຈ້າງພາກລັດທັນສະໄໝໃຫ້ກວມເອົາວຽກງານຈັດຊື້-ຈັດຈ້າງສີຂຽວພາກລັດ ແລະ ຂໍ້ມູນກ່ຽວກັບມາດຕະຖານສີຂຽວ. | - ຊ່ຽວຊານ IT<br>- ໂຄງການສະໜັບສະໜູນໃນການສະໜອງຊ່ຽວຊານສຳລັບການເຊື່ອມໜ້າວຽກຂອງ ການຈັດຊື້-ຈັດຈ້າງສີຂຽວພາກລັດໃນປີ 2023 |
